ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ...082.../ປປທ

ນະຄອນຫຼວງວຽງຈັນ, ວັນທີ...02 ມິຖຸນາ 2023...

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ວ່າດ້ວຍການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈິຕອນຂອງ ສປປ ລາວ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 67;
- ອີງຕາມ ໜັງສືສະເໜີ ຂອງນາຍົກລັດຖະມົນຕີ ສະບັບເລກທີ 36/ນຍ, ລົງວັນທີ 16 ພຶດສະພາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ**

**ມາດຕາ 1** ຕົກລົງແຕ່ງຕັ້ງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈິຕອນ ຂອງ ສປປ ລາວ ປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ — ເປັນປະທານ
2. ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ປະທານຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ — ເປັນຮອງປະທານ
3. ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ — ເປັນຮອງປະທານ
4. ທ່ານ ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ — ເປັນຮອງປະທານ, ຜູ້ປະຈຳການ
5. ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — ເປັນກຳມະການ
6. ທ່ານ ລັດຖະມົນຕີ ກະຊວງການເງິນ — ເປັນກຳມະການ

7. ທ່ານ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ
8. ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ
9. ທ່ານ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ເປັນກຳມະການ
10. ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນກຳມະການ
11. ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ
12. ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ
13. ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ
14. ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ
15. ທ່ານ ລັດຖະມົນຕີ ກະຊວງຍຸຕິທຳ ເປັນກຳມະການ
16. ທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກຳມະການ
17. ທ່ານ ລັດຖະມົນຕີ ກະຊວງພາຍໃນ ເປັນກຳມະການ
18. ທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ ເປັນກຳມະການ
19. ທ່ານ ປະທານສະຖາບັນຄົ້ນຄວ້າເສດຖະກິດ-ສັງຄົມ ແຫ່ງຊາດ ເປັນກຳມະການ
20. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນກຳມະການ
21. ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ເປັນກຳມະການ
22. ທ່ານ ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ, ຫົວໜ້າຄະນະຊ່ວຍວຽກ.

**ມາດຕາ 2** ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານໃນການວາງແນວທາງ, ຍຸດທະສາດ, ກຳນົດນະໂຍບາຍ, ແຜນການ ແລະ ກົນໄກ ໃນການຊີ້ນຳ ຈັດຕັ້ງປະຕິບັດການຫັນເປັນດີຈີຕອນ ຢູ່ສູນກາງ ແລະ ທ້ອງຖິ່ນ ບົນພື້ນຖານການປະຕິຮູບ ແລະ ພັດທະນາລັດຖະບານດີຈີຕອນ, ເສດຖະກິດດີຈີຕອນ ແລະ ສັງຄົມດີຈີຕອນ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຫັນເປັນດີຈີຕອນ ຂອງ ສປປ ລາວ.

**ມາດຕາ 3** ສິດ ແລະ ໜ້າທີ່ ຂອງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ

1. ປະຕິບັດນິຕິກຳ ຂອງ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ວາງອອກຢ່າງເຂັ້ມງວດ.
2. ປະຕິບັດພາລະບົດບາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 2.
3. ຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແນວທາງ, ຍຸດທະສາດ, ກົນໄກ ແລະ ນະໂຍບາຍຊຸກຍູ້ ສົ່ງເສີມການຫັນເປັນດີຈີຕອນ ຂອງ ສປປ ລາວ, ບົນພື້ນຖານການປະຕິຮູບ ແລະ ການພັດທະນາລັດຖະບານດີຈີຕອນ, ເສດຖະກິດດີຈີຕອນ, ສັງຄົມດີຈີຕອນ, ປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດ ຍຸດທະສາດ, ແຜນງານ, ກົນໄກ, ນະໂຍບາຍ, ບັນດາໂຄງການກ່ຽວກັບການຫັນເປັນດີຈີຕອນ, ການພັດທະນາລັດຖະບານດີຈີຕອນ, ເສດຖະກິດດີຈີຕອນ, ສັງຄົມດີຈີຕອນ, ສ້າງເງື່ອນໄຂສະດວກໃຫ້ແກ່ການຫັນເປັນດີຈີຕອນຂອງ ສປປ ລາວ.

4. ຊີ້ນຳບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ປະຕິບັດບັນດາເປົ້າໝາຍການຫັນເປັນດິຈິຕອນ, ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ; ຊີ້ນຳບັນດາພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ຍຸດທະສາດ, ນະໂຍບາຍ, ແຜນງານ, ກົນໄກ, ບັນດາໂຄງການ ກ່ຽວກັບການຫັນເປັນດິຈິຕອນ, ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ; ຕິດຕາມ ແລະ ສົມທົບກັນຈັດຕັ້ງປະຕິບັດໂຄງການຫັນເປັນດິຈິຕອນ, ບັນດາເນື້ອໃນທີ່ກ່ຽວຂ້ອງກັບ ວິໄສທັດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 10 ປີ(2021-2025) ແລະ ແຜນພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 5 ປີ (2021-2025).
5. ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດ ຍຸດທະສາດ, ນະໂຍບາຍ, ແຜນງານ, ໂຄງການ, ກົນໄກ ກ່ຽວກັບການຫັນເປັນດິຈິຕອນ, ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ; ຊຸກຍູ້ການຈັດຕັ້ງປະຕິບັດໂຄງການຫັນເປັນດິຈິຕອນຂອງ ສປປ ລາວ, ປະເມີນ, ຕີລາຄາສະພາບການ ແລະ ຜົນການປະຕິບັດບັນດາໜ້າວຽກທີ່ສຳຄັນ ໃນການຫັນເປັນດິຈິຕອນ ຂອງ ສປປ ລາວ.
6. ແຕ່ງຕັ້ງຄະນະຊ່ວຍວຽກຕົນໃນກໍລະນີມີຄວາມຈຳເປັນ.
7. ຈັດກອງປະຊຸມສາມັນທຸກໆ 6 ເດືອນ ແລະ ກອງປະຊຸມວິສາມັນ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ເພື່ອສະຫຼຸບວາງແຜນ ກຳນົດທິດທາງໜ້າວຽກທີ່ເປັນຈຸດສຸມຂອງການພັດທະນາວຽກງານດິຈິຕອນໃນແຕ່ລະໄລຍະ.
8. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລັດຖະດຳລັດສະບັບນີ້ ໃຫ້ໄດ້ຮັບໝາກຜົນເປັນຢ່າງດີ.

**ມາດຕາ 5** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**